# ຄວາມຕ້ອງການ ແລະ ການຂາດແຄນແຮງງານທັກສະຕໍ່າຂອງວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ໃນ ສປປ ລາວ

**ຜູ້ຂຽນ: ຕິ່ງຄໍາ ວົງພິລາ[1], ພຸດມະນີ ຄໍາມະນີວົງ, ມຸກດາວັນ ເພຍຣາດ, ດວງຕາ ເພຍແກ້ວ**

*ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

[1]***ຜູ້ຮັບຜິດຊອບ:*** *ຕິ່ງຄໍາ ວົງພິລາ, ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

ການຄົ້ນຄວ້າ ຄວາມຕ້ອງການ ແລະ ການຂາດແຄນແຮງງານທັກສະຕໍ່າຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃນ ສປປ ລາວ ມີຈຸດປະສົງແມ່ນ 1) ສຶກສາຄວາມຕ້ອງການຕໍ່ຄຸນລັກສະນະແຮງງານທັກສະຕໍ່າ ທີ່ຜູ້ປະກອບການ, 2) ສຶກສາສະພາບຂອງຜູ້ປະກອບການວິສະຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃນສປປ ລາວ ຕໍ່ການຂາດແຮງງານທັກສະຕໍ່າ, 3) ສຶກສາປັດໄຈທີ່ມີຜົນຕໍ່ການຕັດສິນໃຈຈ້າງງານແຮງງານທັກສະຕໍ່າຕາມລັກສະນະຂອງວຽກ 3D. ວິທີການຄົ້ນຄວ້າແມ່ນແບບສໍາຫຼວດ ໂດຍຜ່ານແບບສອບຖາມ ຈາກຜູ້ປະກອບການຈໍານວນ 3 ແຂວງ ນະຄອນຫຼວງວຽງຈັນ, ສະຫວັນນະເຂດ ແລະ ຈໍາປາສັກ ມີ 390 ວິສາຫະກິດ, ການວິເຄາະຂໍ້ມູນແມ່ນນໍາໃຊ້ໂປຼແກຼມ SPSS ໂດຍວິເຄາະໃຫ້ເຫັນໄດ້ເຖິງ ຈໍານວນ, ສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, T-test, One-way ANOVA ແລະ Multiple Comparisons (Least Significant Differences: LSD) ເພື່ອປຽບທຽບຄວາມແຕກຕ່າງຂອງຄ່າສະເລ່ຍ ໃນລະດັບຄວາມເຊື່ອໝັ້ນ 95% ແລະ ຄ່າສໍາປະສິດສະຫະສໍາພັນແບບເພຍສັນ (Pearson's product moment correlation).

ຜົນການສຶກສາແມ່ນເຫັນໄດ້ວ່າ: 1) ຄຸນລັກສະນະແຮງງານທັກສະຕໍ່າ ທີ່ຕ້ອງການ ແມ່ນອາຍຸຢູ່ລະຫວ່າງ 19-30 ປີ, ການສຶກສາ ແມ່ນປະລິນຍາຕີ, ຄ່າຈ້າງຕໍ່ເດືອນ ແມ່ນຢູ່ລະຫວ່າງ 1,500,000-3,500,000 ກີບ, ມີຄວາມຊື່ສັດ ແລະ ສາມາດວາງໃຈໄດ້, ຄວາມຕ້ອງການຄຸນລັກສະນະທັກສະດ້ານຄວາມຮູ້, ດ້ານວິຊາຊີບ, ດ້ານອຸປະນິດໄສ ແລະ ດ້ານສັງຄົມ ແມ່ນທຸລະກິດບໍລິການ ສ່ວນໃຫຍ່ມີຄວາມຕ້ອງການ ຫຼາຍກວ່າ ທຸລະກິດການຜະລິດ ແລະ ການຄ້າ, ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ສ່ວນໃຫຍ່ມີຄວາມຕ້ອງການ ໜ້ອຍກວ່າ ວິສາຫະກິດຂະໜາດກາງ. 2) ຜູ້ປະກອບການ ມີບັນຫາກ່ຽວກັບການເຂົ້າ-ອອກຂອງແຮງງານ ແລະ ສາເຫດແມ່ນສ່ວນຕ່າງຂອງຄ່າຈ້າງ, ການປັບຕົວ ແມ່ນການຊອກຫາແຮງງານໃໝ່ມາທົດແທນ, ການໃຫ້ນະໂຍບາຍ ແລະ ສະຫວັດດີການຕ່າງໆ, ຊ່ອງທາງໃນການຊອກຫາແມ່ນການຕິດປະກາດໜ້າຮ້ານ, ການປະກາດຕາມສື່ສັງຄົມອອນລາຍ ແລະ ການຝາກບອກຕໍ່. 3) ປັດໄຈທີ່ມີຜົນຕໍ່ການຕັດສິນໃຈຈ້າງແຮງງານທັກສະຕໍ່າ ແມ່ນດ້ານການຂາດແຄນແຮງງານ ທີ່ມີຄວາມສໍາຄັນສູງກວ່າດ້ານອື່ນໆ, ທຸລະກິດການຜະລິດ ແມ່ນມີຜົນຕໍ່ການຕັດສິນໃຈຈ້າງແຮງງານທັກສະຕໍ່າ ດ້ານຕົ້ນທຶນການຈ້າງງານ ແລະ ຄຸນລັກສະນະຂອງແຮງງານ ຫຼາຍກວ່າ ທຸລະກິດການຄ້າ, ທຸລະກິດບໍລິການ ແມ່ນຫຼາຍກວ່າ ທຸລະກິດການຄ້າ. ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແມ່ນໜ້ອຍກວ່າ ຂະໜາດກາງ ດ້ານການປົກຄອງ, ເບິ່ງແຍງ ແລະ ດ້ານນະໂຍບາຍ ແລະ ກົດໝາຍ. ປັດໄຈທີ່ມີຜົນຕໍ່ການຈ້າງງານແຮງງານທັກສະຕໍ່າຕາມລັກສະນະຂອງວຽກ 3D ແມ່ນວຽກໃຊ້ແຮງງານທົ່ວໄປ ທີ່ມີຄວາມສໍາຄັນສູງກວ່າດ້ານອື່ນໆ, ດ້ານການຂາດແຄນແຮງງານ, ຕົ້ນທຶນການຈ້າງງານ, ຄຸນລັກສະນະຂອງແຮງງານ, ການປົກຄອງ ແລະ ເບິ່ງແຍງ, ນະໂຍບາຍ ແລະ ກົດໝາຍ ສ່ວນຫຼາຍ ແມ່ນມີຄວາມສໍາພັນກັບລັກສະນະວຽກ 3D ແຕ່ມີຄວາມສໍາພັນໃນລະດັບຕໍ່າຫຼາຍຫາຕໍ່າ.

**Keywords:** ຄວາມຕ້ອງການ ແລະ ການຂາດແຄນ, ແຮງງານທັກສະຕໍ່າ, ວິສາຫະກິດຂະໜາດນ້ອຍ ແລະ ກາງ.

# Demand and Shortage of the low skill labor of small and medium-sized enterprises (SMEs) in Lao PDR

The research title is Demand and Shortage of Low-Skilled Labor in Small and Medium-Sized Enterprises in the Lao PDR, the objective aims to 1) study the demand for low-skill labor characteristics among entrepreneurs, 2) study the situation regarding the shortage of low-skill labor of small and medium-sized enterprises in the Lao PDR, 3) study the factors that influence the decision to employ low-skill workers according to the characteristics of the 3D job. Use the questionnaire to collect data from 390 entrepreneurs in 3 provinces, Vientiane capital, Savhannakhet province, and Champasak province. Analyze the characteristics and situation of enterprises with descriptive statistics. t-test and One-way ANOVA were used to compare the mean differences.

The research finding reveals that 1) most SME entrepreneurs demand low-skilled workers who are between 19 to 30 years old, education in bachelor's degree, they are willing to pay between 1,500,000-3,500,000 kip for salary, honest and trustworthy. The service sector mostly requires those who have the skills for knowledge, professionalism, character, and social skills more than the manufacturing and trade sectors. Micro and small enterprises are mostly less in demand for low-skilled workers than medium-sized enterprises. 2) Entrepreneurs have problems with the entry-exit of workers, and the reason is the wage gap. The entrepreneurs' adjustment for labor shortages is finding new workers to replace, policies and welfare providing. The channels for finding workers are posting advertisements in front of stores, posting on social media, and telling each other. 3) The main factors that influence the decision to employ low-skill workers are labor shortages, the manufacturing sector has a greater impact on hiring low-skilled workers in terms of employment costs and labor characteristics than the trade and service sectors. Moreover, micro and small-sized enterprises have less impact on the decision to hire low-skilled workers than medium-sized enterprises in terms of administration, supervision, and policy and law positions. The mostly factors that influence the decision to employ low-skilled workers according to the 3D job characteristics are general labor jobs which are more important than other jobs. The finding shows that factors affecting the decision to hire low-skilled workers in terms of labor shortages, employment costs, labor characteristics, administration and supervision, policy, and law have a strong relationship to the 3D job characteristics in very low to low correlation levels.

**Keywords:** Demand and Shortage, low skill labor, SMEs.